ສະຫຼຸບການຊ່ວຍເຫຼືອດ້ານການເງິນ

ເຄືອຂ່າຍຟື້ນຟູສຸຂະພາບ SSM ມີຄວາມມຸ່ງໝັ້ນ ທີ່ຈະໃຫ້ການຊ່ວຍເຫຼືອດ້ານການເງິນ ແກ່ຜູ້ທີ່ບໍ່ມີປະກັນໄພ, ປະກັນໄພບໍ່ຄຸ້ມຄອງ, ບໍ່ໄດ້ຮັບການອຸດໜູນຈາກລັດຖະບານ, ຫຼື ຖ້າບໍ່ດັ່ງນັ້ນບໍ່ສາມາດຈ່າຍຄ່າປິ່ນປົວທີ່ຈຳເປັນທາງການແພດ.

ການຊ່ວຍເຫຼືອດ້ານການເງິນແມ່ນມີໃຫ້ລະບຸຢູ່ໃນລະດັບຊ້ຳ. ຄວາມຕ້ອງການດ້ານການເງິນ ຂອງຜູ້ສະໝັກ ແຕ່ລະຄົນແມ່ນອີງໃສ່ລະດັບຄວາມທຸກຍາກຂອງຣັຖະບານກາງ, ລຶ່ງລວມມີ ລາຍໄດ້ແລະ ຈຳນວນສະມາຊິກໃນຄອບຄົວ. ຄວາມຕ້ອງການທາງດ້ານການເງິນບໍ່ໄດ້ ພິຈາລະນາເຖິງອາຍຸ, ເພດ, ເຊື້ອຊາດ, ສະຖານະພາບທາງສັງຄົມ ຫຼືຄົນອົບພະຍົບ, ການ ຈັດປະເພດຂອງເພດ ຫຼື ສາສະໜາ. ເຄືອຂ່າຍຟື້ນຟູສຸຂະພາບ SSM ຈຳກັດຈຳນວນເງິນ ທີ່ຖືກຄິດໄລ່ສຳລັບການດູແລສຸກເສີນ ແລະຄວາມຈຳເປັນທາງການແພດທີ່ສະໜອງໃຫ້ ຜູ້ປ່ວຍທີ່ມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນພາຍໃຕ້ນະໂຍບາຍນີ້ບໍ່ໃຫ້ເກີນຄ່າບໍລິການ ສຳລັບການດູແລຄຸນດ້ວຍອັດຕາສ່ວນ AGB.

ເພື່ອສະໝັກຂໍການຊ່ວຍເຫຼືອດ້ານການເງິນ, ທ່ານຕ້ອງປະກອບ ຄຳຮ້ອງຂໍການຊ່ວຍເຫຼືອ ດ້ານການເງິນ. ເຂົ້າເບິ່ງເວັບໄຊທ໌ຂອງພວກເຮົາທີ່ **www.ssm-rehab.com** ຫວີ ຫ້ອງ ການບໍລິຫານ ເພື່ອຮັບໃບສະໝັກໂດຍບໍ່ເສຍຄ່າ. ເອກະສານຕໍ່ໄປນີ້ແມ່ນຈຳເປັນຕ້ອງ ປະກອບເຂົ້າໃນໃບສະໝັກຂອງທ່ານ:

- ການຢັ້ງຢືນລາຍໄດ້ (ສອງເດືອນທີ່ຜ່ານມາ)
- ໃບແຈ້ງພາສີຂອງຣັຖະບານການ ຫຼື ຈົດໝາຍທີ່ບໍ່ໄດ້ຕື່ມຂໍ້ມູນຂອງປີທີ່ຜ່ານມາ.

ທີມງານບໍລິຫານຂອງພວກເຮົາ, ຢູ່ໜ່ວຍບໍລິການທີ່ທ່ານໄດ້ຮັບການບໍລິການ, ສາມາດ ຊ່ວຍພິຈາລະນາການມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນຂອງທ່ານ. ຖ້າວ່າສາມາດ ໃຊ້ໄດ້, ພວກເຂົາສາມາດຊ່ວຍທ່ານສະໝັກເອົາໂຄງການ Medicaid ຫຼືວາງແຜນການ ຈ່າຍເງິນ.

ຄົນເຈັບ ແມ່ນຖືກຄາດຫວັງວ່າຈະໃຫ້ການຮ່ວມມືກັບຂັ້ນຕອນການສະໝັກຂໍການຊ່ວຍ ເຫຼືອ ດ້ານການເງິນຂອງເຄືອຂ່າຍຟື້ນຟູສຸຂະພາບ SSM. ການມີສິດໄດ້ຮັບການຊ່ວຍ ເຫຼືອດ້ານການເງິນອາດຈະຖືກຈຳກັດຕໍ່ຜູ້ທີ່ຢູ່ໃນເຂດບໍລິການຕົ້ນຕໍຂອງສະຖານທີ່ດູແລ ຂອງເຄືອຂ່າຍຟື້ນຟູສຸຂະພາບ SSM. ໃນກໍລະນີທີ່ຄົນເຈັບເບິ່ງຄືວ່າມີສິດໄດ້ຮັບການ ຊ່ວຍເຫຼືອດ້ານການເງິນ, ແຕ່ບໍ່ມີຫຼັກຖານໃດໆ, ເຄືອຂ່າຍຟື້ນຟູສຸຂະພາບ SSM ສາມາດ ໃຊ້ໜ່ວຍບໍລິການພາຍນອກພິຈາລະນາສິດໃນການໄດ້ຮັບ.

ນະໂຍບາຍການຊ່ວຍເຫຼືອດ້ານການເງິນແມ່ນແປເປັນພາສາອັງກິດ ແລະ ພາສາສະເປນ ທີ່ເວັບໄຊທ໌ **www.ssm-rehab.com.**

ເຄືອຂ່າຍຟື້ນຟູສຸຂະພາບ SSM ຂໍສະຫງວນສິດໃນການທົບທວນຕາມການພິຈາລະນາ ສິດການຊ່ວຍເຫຼືອດ້ານການເງິນ ຍາມໃດກໍ່ໄດ້. ຈົ່ງເຊື່ອໝັ້ນວ່າ ເຄືອຂ່າຍຟື້ນຟູສຸຂະພາບ SSM ເຂົ້າໃຈເຖິງຄວາມອ່ອນໄຫວຂອງຂໍ້ມູນສ່ວນຕົວຂອງທ່ານ ແລະ ຈະພະຍາຍາມ ເຮັດວຽກໜັກ ເພື່ອປົກປ້ອງຂໍ້ມູນທີ່ເປັນຄວາມລັບຂອງທ່ານ.